ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 251 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 08 ເມສາ 2020

# ຂໍ້ຕົກລົງ
# ວ່າດ້ວຍການລົງທຶນໃນຫຼັກຊັບຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 7 ທັນວາ 2018;
- ອີງຕາມການຄົ້ນຄວ້າ ແລະ ການສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດລະບຽບການລົງທຶນໃນຫຼັກຊັບຂອງທະນາຄານທຸລະກິດ ເພື່ອຈຳກັດຄວາມສ່ຽງທີ່ອາດເກີດຂຶ້ນຈາກການລົງທຶນດັ່ງກ່າວ ແນໃສ່ຮັບປະກັນຄວາມໝັ້ນຄົງຂອງທະນາຄານທຸລະກິດ.

**ມາດຕາ 2 ຂອບເຂດການລົງທຶນໃນຫຼັກຊັບ**

ທະນາຄານທຸລະກິດ ສາມາດລົງທຶນໃນຫຼັກຊັບໃນຕະຫຼາດຫຼັກຊັບ ຢູ່ພາຍໃນ ແລະ ຕ່າງປະເທດ ໄດ້ໃນຂອບເຂດບໍ່ເກີນ ສິບຫ້າ ສ່ວນຮ້ອຍ ຂອງທຶນຊັ້ນໜຶ່ງ ຍົກເວັ້ນການລົງທຶນໃນພັນທະບັດລັດຖະບານ ສປປ ລາວ.

**ມາດຕາ 3 ການຂໍອະນຸຍາດລົງທຶນໃນຫຼັກຊັບໃນຕະຫຼາດຫຼັກຊັບຢູ່ຕ່າງປະເທດ**

ທະນາຄານທຸລະກິດ ທີ່ຕ້ອງການລົງທຶນໃນຫຼັກຊັບໃນຕະຫຼາດຫຼັກຊັບ ຢູ່ຕ່າງປະເທດ ຕ້ອງມີຜົນການດຳເນີນທຸລະກິດທີ່ດີ, ສາມາດປະຕິບັດລະບຽບຄວາມໝັ້ນຄົງທີ່ທະນາຄານແຫ່ງ ສປປ ລາວ ວາງອອກ, ມີບົດສຶກສາການລົງທຶນ ເພື່ອນຳສະເໜີກົມຄຸ້ມຄອງທະນາຄານທຸລະກິດ ພິຈາລະນາອະນຸຍາດເຫັນດີດ້ານຫຼັກການກ່ອນນຳສະເໜີສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອຂໍອະນຸຍາດ ໂດຍສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງໃນແຕ່ລະໄລຍະ.

**ມາດຕາ 4 ການປ່ອຍສິນເຊື່ອເພື່ອລົງທຶນໃນຫຼັກຊັບ**

ທະນາຄານທຸລະກິດ ບໍ່ສາມາດປ່ອຍສິນເຊື່ອທາງກົງ ແລະ ທາງອ້ອມ ໃຫ້ແກ່ບຸກຄົນ ຫຼື ນິຕິບຸກຄົນ ເພື່ອລົງທຶນໃນຫຼັກຊັບໃນຕະຫຼາດຫຼັກຊັບ.

**ມາດຕາ 5 ມາດຕະການບໍລິຫານຄວາມສ່ຽງ**

ທະນາຄານທຸລະກິດ ຕ້ອງມີຄູ່ມືເພື່ອເປັນບ່ອນອີງໃນການວິເຄາະ ແລະ ປະເມີນຄວາມສ່ຽງ ແລະ ມາດຕະການບໍລິຫານຄວາມສ່ຽງໃນການລົງທຶນໃນຫຼັກຊັບ ບໍ່ໃຫ້ກະທົບຕໍ່ສະພາບຄ່ອງ ແລະ ຄວາມໝັ້ນຄົງໂດຍລວມຂອງທະນາຄານ.

**ມາດຕາ 6 ລະບອບລາຍງານ**

ທະນາຄານທຸລະກິດ ຕ້ອງປະຕິບັດລະບອບລາຍງານກ່ຽວກັບການລົງທຶນໃນຫຼັກຊັບ ມາຍັງກົມຄຸ້ມຄອງທະນາຄານທຸລະກິດ ເປັນປະຈຳທຸກເດືອນ ໂດຍແຍກເປັນແຕ່ລະປະເພດຂອງຫຼັກຊັບ ຕາມແບບພິມທີ່ກຳນົດ.

**ມາດຕາ 7 ມາດຕະການຕໍ່ການລະເມີດ**

ທະນາຄານທຸລະກິດ ຫາກລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະ.

**ມາດຕາ 8 ການຈັດຕັ້ງປະຕິບັດ**

ທະນາຄານທຸລະກິດ ມີໜ້າທີ່ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ. ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ເປັນຜູ້ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ.

**ມາດຕາ 9 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງວ່າດ້ວຍການລົງທຶນໃນຫຼັກຊັບຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຮັບເງິນຝາກ ເລກທີ 160/ທຫລ, ລົງວັນທີ 21 ກຸມພາ 2011.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ. ລາວ
ຜູ້ວ່າການ

**ສອນໄຊ ສິດພະໄຊ**